

# ໂຄງການສົ່ງເສີມວຽກເຮັດງານທຳໃນຊົນນະບົດ

## ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ແນະນຳໂຄງການໂດຍສັງເຂບ

### ຜູ້ໃຫ້ທຶນ

ໄລຍະທີ I:ອົງການພັດທະນາສາກົນຂອງປະເທດສະຫະລັດ ອາເມລິກາ (USAID)

### ຄູ່ຮ່ວມງານຫຼັກ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ ແລະ ສະຫະພັນກຳມະບານລາວ.

### ໄລຍະເວລາຂອງໂຄງການ

ໄລຍະທີ I:  2022-2027
ໄລຍະທີ II: 2028-2031

### ຈຸດສຸມດ້ານພູມສາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ໄລຍະທີ I:** 3 ແຂວງເປົ້າໝາຍ, ພາກເໜືອ 1, ພາກກາງ 1 ແລະ ພາກໃຕ້ 1

**ໄລຍະທີ II:** ເພີ່ມອີກ 2 ແຂວງ ເປົ້າໝາຍ

### ກຸ່ມເປົ້າໝາຍ

**ລະດັບມະຫາພາກ:** ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງແຜນການ ແລະ ການລົງທຶນ, ກະຊວງກະສິກຳ ແລະ ປ່າໄມ້, ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດ, ສະຫະພັນກຳມະບານ.

**ລະດັບມະຫາຊົນ:** ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດ, ສະຫະພັນກຳມະບານ. ສູນກາງຊາວໜຸ່ມ, ສະຫະພັນແມ່ຍິງ, ສະມາຄົມ, ພາກທຸລະກິດເອກະຊົນ, ສະຫະກອນ.

**ລະດັບຈຸນລະພາກ:** ແຮງງານແມ່ຍິງ ແລະ ຜູ້ຊາຍຢູ່ຊົນນະບົດ, ຄົນພິການ, ຊາວໜຸ່ມ, ແຮງງານເຄືອນຍ້າຍກັບບ້ານ ແລະ ຄົນຫຼາກຫຼາຍທາງເພດ.

**ຈຳນວນກຸ່ມເປົ້າໝາຍທັງໝົດ:** ໄລຍະທີ I: 7,500 ຄົນ ແລະ ໄລຍະທີ II: 17,500 ຄົນ.



© ILO 2023



© ILO 2023

## ຄວາມເປັນມາ

ເຖິງແມ່ນວ່າ ເສດຖະກິດຂອງ ສ ປປ ລາວ ມີການຂະຫຍາຍຕົວສູງໃນທົດສະວັດທີ່ຜ່ານມາ (2010-2019), ແຕ່ການຈ້າງງານໄດ້ເພີ່ມຂຶ້ນໃນອັດຕາທີ່ຕໍ່າກວ່າ. ເມື່ອບໍ່ມີການສ້າງວຽກເຮັດງານທຳ, ການຂະຫຍາຍຕົວທາງດ້ານເສດຖະກິດຢ່າງວ່ອງໄວຈຶ່ງບໍ່ໄດ້ເຮັດໃຫ້ອັດຕາຄວາມທຸກຍາກທີ່ສູງຫຼຸດລົງໄດ້ ແຕ່ສຳພັດເຮັດໃຫ້ຄວາມບໍ່ເທົ່າທຽມກັນເພີ່ມຂຶ້ນ. ການຈ້າງງານບໍ່ເຕັມເວລາ ແລະ ວຽກຕາມລະດູການຍັງມີລັກສະນະພົ້ນເດັ່ນໃນຕະຫຼາດແຮງງານຢູ່ຊົນນະບົດ. ຈຳເປັນຕ້ອງມີຄວາມພະຍາຍາມໃນການພັດທະນາເພື່ອເລັ່ງການຂະຫຍາຍຕົວແບບຮອບດ້ານ ທີ່ສ້າງວຽກເຮັດງານທຳທີ່ດີກວ່າ ແລະ ຫຼຸດຜ່ອນຄວາມທຸກຍາກ. ຍຸດທະສາດແຫ່ງຊາດເພື່ອການສົ່ງເສີມວຽກເຮັດງານທຳ ຢູ່ຊົນນະບົດ (NRES) ໄດ້ໃຫ້ກອບແຜນວຽກແຫ່ງຊາດທີ່ຄົບຖ້ວນ ເພື່ອເຊື່ອມໂຍງກັບການສ້າງວຽກເຮັດງານທຳ ຢູ່ຊົນນະບົດແບບຍືນຍົງ, ເປັນທຳ ແລະ ມີປະສິດທິຜົນ ໃຫ້ແກ່ ວິໄສທັດ ແລະ ຍຸດທະສາດການພັດທະນາແຫ່ງຊາດໃນໄລຍະຍາວຂອງ ສປປ ລາວ.

ອົງການແຮງງານສາກົນ ໂດຍຮ່ວມມືກັບ ອົງການສະຫະປະຊາຊາດ ກອງທຶນເພື່ອປະຊາກອນ (UNFPA) ມີຈຸດປະສົງເພື່ອສະໜັບສະໜູນລັດຖະບານ ຂອງ ສປປ ລາວ ກໍ່ຄື ອົງການຜູ້ໃຊ້ແຮງງານ ແລະ ອົງການຜູ້ອອກແຮງງານ ໃນການຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດເພື່ອການສົ່ງເສີມວຽກເຮັດງານທຳ ຢູ່ຊົນນະບົດ (NRES) ໂດຍຜ່ານໂຄງການສົ່ງເສີມວຽກເຮັດງານທຳ ຢູ່ຊົນນະບົດ (REP).

## ເປົ້າໝາຍຂອງໂຄງການ

ແຮງງານແມ່ຍິງ ແລ ຜູ້ຊາຍ ລວມທັງຄົນພິການ, ໄວໜຸ່ມ, ແຮງງານເຄື່ອນຍ້າຍທີ່ກັບບ້ານ ແລະ ກຸ່ມຫຼາກຫຼາຍທາງເພດໃນເຂດຊົນນະບົດມີລາຍຮັບສຸດທິເພີ່ມຂຶ້ນ, ມີການຈ້າງງານທີ່ມີປະສິດທິຜົນ ໂດຍຜ່ານການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອການສົ່ງເສີມວຽກເຮັດງານທຳ ຢູ່ຊົນນະບົດ (NRES).

ເພື່ອບັນລຸເປົ້າໝາຍດັ່ງກ່າວ, ບັນດາກິດຈະກຳໄດ້ຈັດເປັນ 3 ກຸ່ມພາຍໃຕ້ 3 ອົງປະກອບ ດັ່ງລຸ່ມນີ້:
**ອົງປະກອບທີ 1:** ປັບປຸງລະບົບສະຖານອະຊີວະສຶກສາ ແລະ ສະຖານພັດທະນາສີມືແຮງງານ ແລະ ການບໍລິການຈັດຫາງານ.
**ອົງປະກອບທີ 2:** ເພີ່ມທະວີການເຊື່ອມໂຍງຕະຫຼາດຂອງຜູ້ຜະລິດຂັ້ນຕົ້ນ, ແຮງງານຊົນນະບົດ ແລະ ວິສາຫະກິດ.
**ອົງປະກອບທີ 3:** ພັດທະນາຄວາມສາມາດຂອງພາກລັດ-ເອກະຊົນເພື່ອອຳນວຍຄວາມສະດວກໃຫ້ແກ່ການຈ້າງງານ, ການລົງທຶນ ແລະ ການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອການສົ່ງເສີມວຽກເຮັດງານທຳ ຢູ່ຊົນນະບົດ (NRES).

## ຜົນໄດ້ຮັບຂອງໂຄງການ

**ຜົນໄດ້ຮັບ 1:** ແມ່ຍິງ ແລະ ຜູ້ຊາຍ ຢູ່ຊົນນະບົດ ລວມທັງ ຄົນພິການ, ໄວໜຸ່ມ, ແຮງງານເຄື່ອນຍ້າຍກັບບ້ານ ແລະ ກຸ່ມຫລາກຫລາຍທາງເພດ ໄດ້ເພີ່ມຄວາມສາມາດໃນການຈ້າງງານຂອງຕົນ ແລະ ເຊື່ອມໂຍງໂອກາດກັບການຈ້າງງານທີ່ເປັນທຳຢ່າງມີປະສິດທິພາບ  ໂດຍສະເພາະໃນຂະແໜງນອກກະສິກຳ.

**ຜົນໄດ້ຮັບ 2:** ສ້າງໂອກາດການຈ້າງງານທີ່ດີຂຶ້ນ ແລະ ເພີ່ມຄວາມຕ້ອງການແຮງງານທີ່ເປັນເພດຍິງ ແລະ ຊາຍ ລວມທັງ ຄົນພິການ, ໄວໜຸ່ມ, ແຮງງານເຄື່ອນຍ້ານທີ່ກັບບ້ານ ແລະ ກຸ່ມຫຼາກຫລາຍທາງເພດ.

**ຜົນໄດ້ຮັບ 3:** ອົງການຈັດຕັ້ງພາກລັດ ແລະ ສະມາຊິກທຸລະກິດພາກເອກະຊົນທີ່ກ່ຽວຂ້ອງ ລວມທັງ ກຳມະບານ ໄດ້ມີທັກສະ ແລະ ຄວາມສາມາດເພື່ອອຳນວຍຄວາມສະດວກໃນການຈ້າງງານໃນຊົນນະບົດ, ການລົງທຶນ ແລະ ການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອການສົ່ງເສີມວຽກເຮັດງານທຳ ຢູ່ຊົນນະບົດ (NRES).

## ວິທີ່ການຂອງໂຄງການ

ໂຄງການສົ່ງເສີມວຽກເຮັດງານທຳໃນຊົນນະບົດ ຮັບຮອງເອົາຍຸດທະສາດ 4 ດ້ານທີ່ຕິດພັນກັນທາງດ້ານລັກສະນະ ແລະ ເສີມສ້າງເຊິ່ງກັນ ແລະ ກັນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ NRES.

A. ວິທີການຕາມຂະແໜງການ - ການພັດທະນາຕ່ອງໂສ້ການຜະລິດ.
B. ວິທີການເຊື່ອມສານລະຫວ່າງຂະແໜງການ–ການພັດທະນາວິສາຫະກິດ, ຊີວິດ ແລະ ວິຊາຊີບ.
C. ວິທີ່ການແບບກວມລວມ ແລະ ເຊື່ອມສານກັນ.
D. ສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການເຮັດທຸລະກິດ.




**Contact details**

**International Labour Organization**
KOLAO Tower II, 8th Floor, Room 804
Ban Nongbone, 23 Singha Road
Saysettha district, P.O. Box 8156
Vientiane, Lao People's Democratic Republic

Mohammad Khairul Islam, Project Manager
E: khairulislam@ilo.org

Bounthavy Bounmy, National Project Coordinator
E: bounmy@ilo.org

W: www.ilo.org/lao

© International Labour Organization 2023